ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ເລກທີ: 989 /ພກພ

ນະຄອນຫຼວງວຽງຈັນ, 16 OCT 2023

ໜັງສືລາຍງານ

ຮຽນ: ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ເຄົາລົບ ແລະ ນັບຖື.

ທ່ານ ຜູ້ອຳນວຍການໃຫ່ຍ ຕະຫຼາດຫຼັກຊັບລາວ ທີ່ເຄົາລົບ ແລະ ນັບຖື.

ທ່ານ ຜູ້ຖືຮຸ້ນຂອງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ທີ່ເຄົາລົບ ແລະ ນັບຖື.

ເລື່ອງ: ການລາຍງານກ່ຽວກັບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນປັບປຸງ ແລະ ຟື້ນຟູທຸລະກິດຂອງບໍລິສັດ.

- **ອີງຕາມ ໜັງສືແຈ້ງການຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການຮັກສາຖານະການເປັນບໍລິສັດທີ່ຈົດທະບຽນໃນ ຕລຊລ ຂອງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ.**
- **ອີງຕາມ ການຕົກລົງເຫັນດີຂອງ ສະພາບໍລິຫານ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ.**

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ຂໍຖືເປັນກຽດລາຍງານມາຍັງທ່ານເພື່ອຮັບຊາບກ່ຽວກັບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນປັບປຸງ ແລະ ຟື້ນຟູທຸລະກິດຂອງບໍລິສັດ ນັບຕັ້ງແຕ່ເກີດມີພະຍາດໂລກລະບາດ COVID 19 ຈົນເປັນສາເຫດໜຶ່ງທີ່ເຮັດໃຫ້ບໍລິສັດຂອງພວກເຮົາໄດ້ຮັບຜົນກະທົບໂດຍກົງຈົນເຮັດໃຫ້ບໍລິສັດເກີດການດ້ອຍຄ່າຂອງທຶນ ແຕ່ເຖິງຢ່າງໃດກໍ່ຕາມມາຮອດປະຈຸບັນບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ກໍ່ໄດ້ເລີ່ມປະຕິບັດບາງໂຄງການທີ່ພວກເຮົາໄດ້ມີແຜນມາກ່ອນໜ້ານັ້ນແລ້ວເພື່ອໃຫ້ສອດຄ່ອງກັບແນວທາງການແກ້ໄຂບັນຫາ ແລະ ປັບປຸງແຜນຟື້ນຟູທຸລະກິດຂອງບໍລິສັດ ເຊິ່ງລາຍລະອຽດມີດັ່ງລຸ່ມນີ:

- ໂຄງການບໍ່ຖ່ານຫີນແມ່ນ ຢູ່ທີ່ເຂດເມືອງວຽງພູຄາ ແຂວງຫຼວງນ້ຳທາແມ່ນມີເນື້ອທີ່ທັງໝົດ 13.96 km^2 ທີ່ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ເປັນຜູ້ຖືຮຸ້ນ 25% ກັບບໍລິສັດ ແອວ ນໍເຕີ້ນພັດທະນາ ຈຳກັດ ຜູ້ດຽວ ແລະ ບໍລິສັດ ພົນນາເຄີ້ນອິນເວສເມັນຄາປິໂຕ ຈຳກັດຜູ້ດຽວ. ເຊິ່ງທີ່ຜ່ານມາບໍລິສັດ ກໍ່ພົບບັນຫາສະພາບອາກາດບໍ່ອຳນວຍຄວາມສະດວກເພາະວ່າຢູ່ໃນຊ່ວງລະດູຝົນເຮັດໃຫ້ການປະຕິບັດວຽກແມ່ນມີຄວາມຫຍຸ້ງຍາກພໍສົມຄວນຈຶ່ງບໍ່ສາມາດເຮັດວຽກໄດ້ເຕັມເມັດເຕັມໜ່ວຍ. ປະຈຸບັນນີ້ໂຄງການບໍ່ຖ່ານຫີນແມ່ນຢູ່ໃນຂະບວນການສຳຫຼວດ ແລະ ຊີເຈາະຈຸດທີ່ປະກົດ ແລະ ເປັນເສດຖະກິດທີ່ສຸດ ຄາດວ່າຈະໃຫ້ໄດ້ຂຸດຄົ້ນໃນ

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3 ໂຮງແຮມ ຄອນຕິເນັນໂທພຣາຊ່າ, ຖະໜົນ ໜອງບົວທອງ, ບ້ານ ໜອງບົວທອງໃຕ້ ເມືອງ ສີໂຄດຕະບອງ ນະຄອນຫຼວງວຽງຈັນ. ໂທ 021 229696

ຕົ້ນປີ 2024 ເພື່ອເລັ່ງສ້າງລາຍຮັບເຂົ້າໃນບໍລິສັດກໍ່ຄືພາຍໃນປະເທດ. ຄາດຄະເນສຳລັບໂຄງການນີ້ສະເພາະ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ລາຍຮັບປະມານ 5,000,000 ໂດລາຕໍ່ປີ ແລະ ລາຍຮັບຈາກ ການ ຮັບເໝົາຂຸດຄົ້ນຖ່ານຫີນປະມານ 12,000,000 ໂດລາຕໍ່ປີ ລວມລາຍຮັບສະເລ່ຍປະມານ 17,000,000 ໂດລາຕໍ່ປີ.

- ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ລົງທຶນໂຄງການທາງເລັ່ນຕໍ່ເມືອງດອນໝົນ ຫາ ບ້ານບໍ່ອ ນະຄອນຫຼວງວຽງຈັນ ໃນໄລຍະ 30 ກິໂລແມັດ ໃນໄລຍະທີ່ຜ່ານມາໂຄງການດັ່ງກ່າວບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ກໍ່ໄດ້ມີການປະກອບບົດລາຍງານຕ່າງໆຂອງໂຄງການເຂົ້າໄປຫາເຈົ້າຂອງໂຄງການ ແລະ ໄດ້ປະກອບແບບຄອນເຊັບ ພ້ອມກັນນັ້ນຍັງໄດ້ມີການຮ່ວມປະຊຸມເພື່ອປຶກສາຫາລືກັບເຈົ້າຂອງໂຄງການເພື່ອ ປຶກສາຫາລືກ່ຽວກັບບົດສຳຫຼວດຕ່າງໆບໍ່ວ່າຈະເປັນການສຳຫຼວດດ້ານເຕັກນິກ, ການສຳຫຼວດດ້ານ ສິ່ງແວດລ້ອມ ແລະ ອື່ນໆ. ສຳລັບໂຄງການດັ່ງກ່າວບໍລິສັດຂອງພວກເຮົາໄດ້ມີການຄາດຄະເນມູນຄ່າການ ລົງທຶນຢູ່ທີ່ 210 ລ້ານໂດລາ ດ້ວຍຜົນຕອບແທນ 10%. ເຊິ່ງໂຄງການດັ່ງກ່າວກໍ່ພ້ອມທີ່ຈະລົງມືປະຕິບັດໄວໆ ນີ້.
- ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ລົງທຶນ ໃນພະລັງງານໄຟຟ້າແສງອາທິດໃນເຂດພາກເໜືອຂອງ ສ ປ ປ ລາວ 1000 ເມັກກາວັດຄາດຄະເນມູນຄ່າການລົງທຶນ 800 ລ້ານໂດລາ ດ້ວຍຜົນຕອບແທນ 12,8 % ເຊິ່ງໂຄງການດັ່ງກ່າວກໍ່ແມ່ນຍັງຢູ່ຂະບວນການໃນການລົງເກັບກຳຂໍ້ມູນໃນເບື້ອງຕົ້ນເພື່ອປະເມີນຕົ້ນທຶນຂອງ ການລົງທຶນ ເພື່ອຂະໄດ້ນຳເອົາຂໍ້ມູນມາເຮັດແບບຄອນເຊັບ ແລະ ໄດ້ກະກຽມເອກະສານຕຽມເຂົ້າປະມູນ.
- ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ໄດ້ລົງສຳຫຼວດເກັບກຳຂໍ້ມູນໂຄງການພະລັງງານໄຟຟ້ານ້ຳຕົກຢູ່ ເຂດພາກເໜືອຂອງ ສ ປ ປ ລາວ ໂຄງການນີ້ກໍ່ຍັງຢູ່ໃນຂະບວນການລົງເກັບກຳຂໍ້ມູນໃນເບື້ອງຕົ້ນ ແລະ ກະກຽມເອກະສານເຂົ້າປະມູນ.

ດ້ວຍເຫດຜົນດັ່ງກ່າວນີ້ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ຄາດຄະເນໄວ້ວ່າຈະສາມາດແກ້ໄຂບັນຫາ ການດ້ອຍຄ່າຂອງທຶນໄດ້ຕາມແຜນທີ່ພວກເຮົາກະກຽມໄວ້, ສະນັ້ນ ຈຶ່ງຮຽນສະເໜີມາຍັງທ່ານຊ່ວຍພິຈາລະນາ ຕາມ ຄວາມເໝາະສົມດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ.

ຜູ້ອຳນວຍການໃຫ່ຍ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ.

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

Phousy Construction and Development Public Company

ສີທາ ພົມມະຈິດ